# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 24 ພຶສພາ 2020 (05-24-2020)

## ຍິນຍອມ

*ເມື່ອໃດທີ່ທ່ານຢາກເປັນຜູ້ທີໜຶ່ງຢູ່ຫົວແຖວ?*

**ຈຸດສຳຄັນໃນບົດຮຽນ:** ການຖ່ອມຕົນຈັດຄວາມຕ້ອງການຂອງຄົນອື່ນກ່ອນຄວາມຕ້ອງການຂອງທ່ານເອງ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຂ້າພະເຈົ້າຄິດຢາກຫົວເວລາຂ້າພະເຈົ້າເຫັນຄົນກາງເຕັນລຽນແຖວຍາມກາງຄືນເພື່ອຢາກເປັນຜູ້ທີໜຶ່ງຖ້າຊື້ໂທລະສັບ, ແທບເລັດ...ລຸ້ນຫຼ້າສຸດ. ອີກດ້ານນຶ່ງ, ຂ້າພະເຈົ້າເສົ້າໃຈຍາມເຫັນຂ່າວຄົນແຫຼ້, ຄົນຊຸກ, ແລະແມ້ກະທັ້ງຊົກກັນຍາດກັນເປັນຜູ້ທີໜຶ່ງໜ້າຮ້ານຄ້າໃນມື້ black Friday sale ໃນທ້າຍອາທິດເນື່ອງໃນໂອກາດວັນຂອບພຣະຄຸນ. ພວກເຮົາບໍ່ຢາກເປັນທີໜຶ່ງສເມີໄປດອກ.

- ເດັກສີ່ຂວບຍິນດີໃຫ້ເອື້ອຍຂອງລາວອອກໜ້າຍາມລຽນຄິວໄປສີດຢາ.
- ນັກສະຈິນພັຍອາດຖອຍຫຼັງ ແລະໃຫ້ຜູ້ອື່ນອາສາສມັກຮັບງານມອບໝາຍທີ່ໜ້າເບື່ອ.

ຕົວຢ່າງເຫຼົ່ານີ້ບອກຢ່າງນຶ່ງ, ບໍ່ວ່າຈະເປັນຜູ້ທີໜຶ່ງຫຼືຜູ້ສູດທ້າຍໃນແຖວ: ແມ່ນຄວາມເຫັນແກ່ຕົວ. ມັນກ່ຽວກັບສິ່ງທີ່ຂ້ອຍຢາກໄດ້ກໍແຊງອອກໜ້າ...ຫຼືສິ່ງທີ່ຂ້ອຍຫຼີກເວັ້ນກໍຫາທາງຫຼົບຫຼີກແລ້ວຫຼອກໃຫ້ຄົນອື່ນອອກກ່ອນ. ຄວາມປາຖນາຢາກໄດ້ກ່ອນກໍບໍ່ແມ່ນຄວາມຜິດໂດຍຕົງດອກ, ແຕ່ເມື່ອຂ້ອຍຊິງເຂົ້າເພື່ອເອົາປຽບຜູ້ອື່ນ, ຂ້ອຍໄດ້ເອົາຕົວຂ້ອຍກ່ອນແລະທຳລາຍຄວາມສັມພັນຂອງຂ້ອຍ.

**ພຣະຄັມພີກ່າວວ່າແນວໃດ :** ( ເບິ່ງຕາມຂໍ້ 1, 2 ແລະ 3 )

### ການສຶກສາພຣະຄັມພີ

**1. ຟີລິບປອຍ 2:1-4.**

*1 ເຫດສັນນັ້ນ ຖ້າຊີວິດໃນພຣະຄຣິດອຳນວຍການຊູກຳລັງໃຈ, ຖ້າມີຄວາມເລົ້າໂລມປະການໃດໃນຄວາມຮັກ, ຖ້າມີສ່ວນຮ່ວມໃຈກັບພຣະວິນຍານປະການໃດ, ຖ້າມີຄວາມເມດຕາເອັນດູປະການໃດ, 2 ກໍຂໍໃຫ້ເຈົ້າທັງຫຼາຍເຮັດໃຫ້ຄວາມຍິນດີຂອງເຮົາຄົບເຕັມ ດ້ວຍການທີ່ມີຄວາມຄຶດຢ່າງດຽວກັນ, ມີຄວາມຮັກຢ່າງດຽວກັນ, ມີຄວາມສາມັກຄີເປັນນ້ຳນຶ່ງໃຈດຽວກັນ. 3 ຢ່າເຮັດສິ່ງໃດໃນທາງຊິງດີຫຼືຖືດີກັນ ແຕ່ຈົ່ງຖ່ອມໃຈລົງຖືວ່າຄົນອື່ນດີກວ່າຕົນ. 4 ຢ່າໃຫ້ຜູ້ໃດເຫັນແກ່ປໂຍດຂອງຕົນຝ່າຍດຽວ ແຕ່ຈົ່ງເຫັນແກ່ປໂຍດຂອງຄົນອື່ນດ້ວຍ.*

ທ່ານໂປໂລທ້າທາຍຄຣິສຕະຈັກຟີລິບປອຍໃຫ້ບຸກບືນຂຶ້ນສູ່ລະດັບຄວາມເຕີບໃຫຍ່ໃນຄວາມສັມພັນ. ເພິ່ນໄດ້ຊູກຳລັງໃຈຜູ້ເຊື່ອ “ຂໍໃຫ້ເຈົ້າທັງຫຼາຍເຮັດໃຫ້ຄວາມຍິນດີຂອງເຮົາຄົບເຕັມດ້ວຍການທີ່ມີຄວາມຄິດຢ່າງດຽວກັນ, ມີຄວາມຮັກຢ່າງດຽວກັນ,ມີຄວາມສາມັກຄີເປັນນ້ຳນຶ່ງໃຈດຽວກັນ”(ຂໍ້ 2) *ຊ່າງສະບາຍໃຈອີ່ຫຼີທີ່ປະຊາຊົນຂອງພຣະເຈົ້າຢູ່ຮ່ວມກັນດ້ວຍຄວາມປອງດອງຢ່າງນີ້ (ເພງສັຣເສີນ133:1),* ດັ່ງດຽວກັນກັບເພັງທີ່ໄດ້ຝຶກຊ້ອມໄວ້ຢ່າງດີກາຍເປັນ “ດົນຕຣີທີ່ມ່ວນຫູ”. ຖ້າໂບດຂອງທ່ານເປັນຄືກັນກັບກັບໂບດສ່ວນໃຫຍ່, ສະມາຊິກບໍ່ເຫັນພ້ອມກັບງົບປະມານປະຈຳປີ, ແຕ່ທ່ານສາມາດເຫັນພ້ອມທີ່ຈະຢູ່ນຳກັນ, ເຮັດນຳກັນ, ອະທິຖານນຳກັນ, ແລະ ຮັບໃຊ້ນຳກັນ. ທ່ານສາມາດເລືອກທີ່ຈະຍູ້ຄວາມແຕກຕ່າງອອກໄປທາງຂ້າງ ແລະ ປະຕິບັດຕໍ່ກັນ “ດ້ວຍຄວາມຮັກໄຄ່ ແລະ ຄວາມເມດຕາປານີ

ກັນ".  ທ່ານໂປໂລໄດ້ເນັ້ນໜັກຄວາມເປັນນ້ຳນຶ່ງໃຈດຽວກັນແລະເປັນກາຍອັນດຽວກັນກັບພຣະຄຣິດ ຮູ້ສຶກອົບອຸ່ນ ແລະ ໄດ້ຮັບການຕ້ອນຮັບ, ແລະໃນຂໍ້ 3-4 ເພິ່ນໄດ້ໃຫ້ຄຳທ້າທາຍຢ່າງໜັກແໜ້ນວ່າ ຜູ້ເຊື່ອຈະຮັກສາຄວາມຮັກ ແລະ ຄວາມເປັນອັນນຶ່ງອັນດຽວກັນນັ້ນຢ່າງໃດ. ເພິ່ນເວົ້າຄວາມຈິງນີ້ທັງທາງບວກ ແລະທາງລົບທັງສອງດ້ານ. ດ້ານລົບ, ເພິ່ນແນະນຳວ່າ, *"ຢ່າເຮັດສິ່ງໃດໃນທາງຊິງດີຫຼືຖືດີກັນ"(ຂໍ້3) ແລະ ຢ່າເຫັນແກ່ຜົນປະໂຫຍດຂອງຕົນຝ່າຍດຽວ."* ໃນທາງກົງກັນຂ້າມ, ທ່ານໂປໂລໃຫ້ຄຳແນະນຳຜູ້ເຊື່ອວ່າໃຫ້ຖ່ອມຕົວລົງ,*"ຈົ່ງຖ່ອມໃຈລົງຖືວ່າຄົນອື່ນດີກວ່າຕົນ". ແລະ "ຈົ່ງເຫັນແກ່ປະໂຫຍດຂອງຄົນອື່ນດ້ວຍ."*

***ສະຖານະການໃດທີ່ຊັກນຳທ່ານໃຫ້ເພີກເສີຍຕໍ່ຄຳແນະນຳໃນຂໍ້ພຣະຄັມພີເຫຼົ່ານີ້?***

ນີ້ບໍ່ແມ່ນຄຳເຊີນໃຫ້ເປັນພົມປູໜ້າປະຕູແລະໃຫ້ຄົນອື່ນຢຽບທ່ານໄປ! ທ່ານໂປໂລບໍ່ໄດ້ແນະນຳໃຫ້ທ່ານມອງຂ້າມຄວາມຕ້ອງການຂອງທ່ານຫຼືກີດກັ້ນຜົນປະໂຫຍດຂອງທ່ານເອງ. ມັນເປັນການດີທີ່ທ່ານຕ້ອງຮັບຜິດຊອບຕໍ່ສິ່ງຈຳເປັນໃນຊີວິດທ່ານ, ແຕ່ ຢ່າໃຫ້ການກະທຳສິ່ງໃດທີ່ເຮັດໃຫ້ຜູ້ອື່ນເສັຽຫາຍ. ຈົ່ງທຳງານຊ່ອຍເຫຼືອເພື່ອຕອບສນອງຄວາມຕ້ອງການຂອງຄົນອື່ນດັ່ງດຽວກັບທ່ານເຮັດວຽກ ເພື່ອຕອບສນອງຄວາມຕ້ອງການຂອງທ່ານເອງ. ພຣະເຢຊູໄດ້ຖແລງໃນພຣະບັນຍັດຂໍ້ສອງວ່າ *"ຈົ່ງຮັກເພື່ອນບ້ານເໝືອນຮັກຕົນເອງ" (ມັດທາຍ22:39)*-ແທນທີ່ຈະຮັກຕົວທ່ານເອງ. ແຖມ, ພວກເຮົາບໍ່ຄວນນຶກວ່າຜົນປະໂຫຍດຂອງຕົນສຳຄັນກວ່າຜົນປະໂຫຍດຂອງຄົນອື່ນ. ທ່ານ "ເຫັນແກ່" ຜົນປະໂຫຍດຂອງຄົນອື່ນບໍ່..ຫຼືທ່ານ "ເຫັນແກ່" ຜົນປະໂຫຍດຂອງຕົນເປັນຫຼັກ? ຖ້າທ່ານເປັນເໝືອນຂ້າພະເຈົ້າ, ທ່ານອາດບໍ່ມີບັນຫາຈັກໜ້ອຍທີ່ຄິດກ່ຽວກັບຄວາມປາຖນາຂອງຕົນ-ສິ່ງທີ່ທ່ານຢາກໄດ້. ພວກເຮົາສ່ວນຫຼາຍບໍ່ຕ້ອງການສັນຍານ(alarm) ທີ່ມືຖືຂອງເຮົາເພື່ອບອກເຮົາໃຫ້ກິນ, ນອນ, ຫຼື ຫຼິ້ນ. ພວກເຮົາຈັດການເອງໂດຍບໍ່ຕ້ອງຄິດ. ເຖິງຢ່າງໃດກໍຕາມ, ພວກເຮົາຕ້ອງການຄຳເຕືອນສະຕິຂອງເຮົາໃຫ້ຈົດຈໍ່ໃສ່ຄົນອື່ນຢູ່ສເມີ. ທ່ານໂປໂລໄດ້ໃຫ້ຄຳເຕືອນທີ່ນີ້, ຊຸກຍູ້ເພື່ອນຊາວຟີລິບປອຍຂອງເພິ່ນ-ແລະພວກເຮົາ-ໃຫ້ຈົດຈໍ່ໃສ່ຄວາມຕ້ອງການຂອງຄົນອື່ນເປັນໃຫຍ່ກວ່າຈົດຈໍ່ໃສ່ຊີວິດຂອງເຮົາເອງ.

## 2. <u>ຟີລິບປອຍ 2:5</u>.

*5 ເຈົ້າທັງຫຼາຍຈົ່ງມີນ້ຳໃຈຕໍ່ກັນ ເໝືອນທີ່ມີໃນພຣະເຢຊູຄຣິດ.*

ການເຝົ້າເບິ່ງຄົນອື່ນປະຕິບັດການອາດເປັນການຮຽນຮູ້ທີ່ດີທີ່ສຸດ. ບໍ່ເປັນເຣື່ອງແປກທີ່ການສະແດງວີດີໂອ ໃນຢູທູບ(YouTube)ໄດ້ຜົນເພີ້ມຂຶ້ນຫຼາຍເທົ່າທະວີຄູນ. ທ່ານຮຽນດ້ວຍການສັງເກດ ແທນການອ່ານຄຳແນະນຳຈາກປຶ້ມຄູ່ມືບໍ່ດີກວ່າບໍ່?

ທ່ານໂປໂລໄດ້ທ້າທາຍໃຫ້ຜູ້ເຊື່ອສັງເກດເບິ່ງພຣະເຢຊູເພື່ອຮຽນຮູ້ວ່າການຖ່ອມຕົວເປັນແນວໃດ. ພວກເຮົາຄວນເຮັດຕາມແບບຢ່າງຂອງພຣະອົງ. ພຣະຄຣິດໄດ້ຊົງປະທານເຄື່ອງບູຊາຄົບຖ້ວນແທນຄວາມບາບຂອງເຮົາ, ແລະໄດ້ຊົງໃຫ້ແບບຢ່າງອັນສົມບູນເພື່ອຊີ້ທາງໂດຍທາງຄວາມສັມພັນສ່ວນຕົວ, ຈົນກາຍເປັນນິສັຍດັ່ງດຽວກັນກັບອຸປນິສັຍຂອງພຣະເຢຊູຄຣິດ: "ຮັບເອົານິສັຍດັ່ງດຽວກັນກັບນິສັຍພຣະຄຣິດເຈົ້າເຢຊູ."  ພຣະເຢຊູຊົງເປັນຕົວຢ່າງທີ່ດີເລີດສຳລັບພວກເຮົາ. ຂໍ້ 6-11 ໄດ້ຊີ້ບອກວ່າພຣະເຢຊູໄດ້ສຳແດງການຖ່ອມຕົວຢ່າງຄົບຖ້ວນຢ່າງໃດແລະໄດ້ຊົງສລະພຣະອົງແທນພວກເຮົາໃນທີ່ສຸດ: ພຣະອົງຊົງສິ້ນພຣະຊົນເພື່ອເຮົາ ແລະ ນຳເຮົາມາຫາພຣະເຈົ້າ. "ພຣະອົງໄດ້ຊົງສລະພຣະອົງເອງຈົນໝົດສິ້ນ. "ພຣະເຢຊູຊົງເປັນພຣະເຈົ້າຢ່າງຄົບເຕັມບໍຣິບູນ, ແຕ່ພຣະອົງຊົງຍອມສລະພຣະກຽດ ແລະສິດພິເສດອັນຊຶ່ງເປັນກັມມະສິດຂອງພຣະອົງ.

ພວກເຮົາທຸກຄົນໄດ້ເຄີຍພົບຄົນ "ເຫັນແກ່ຕົວ" ມາແລ້ວ.  ທ່ານອາດເຄີຍເປັນບຸກຄົນປະເພດດັ່ງກ່າວມາດ້ວຍ

ຕົວເອງແລ້ວນຶ່ງຫຼືສອງຄັ້ງ. ຍາມຄົນໃດຄົນນຶ່ງເຫັນແກ່ຕົວຢ່າງເຕັມປ່ຽມແລ້ວ, ລາວກໍບໍ່ມີບ່ອນຫວ່າງສຳລັບຄົນອື່ນ. ຄວາມເຫັນຂອງລາວກໍເປັນຄວາມເຫັນສລາດທີ່ສຸດ ແລະ ປະສົບການຂອງລາວກໍເປັນປະສົບການທີ່ຮັ່ງມີທີ່ສຸດ. ລາວພະຍາຍາມເຮັດໃຫ້ຕົວເອງເປັນຄົນສຳຄັນກວ່າຄົນອື່ນ. ພຣະເຢຊູຮຽກຮ້ອງໃຫ້ເຮົາຍອມເສັຽສລະຄວາມເຫັນແກ່ຕົວແລະເຫັນແກ່ຜົນປໂຍດຂອງຄົນອື່ນກ່ອນ. ນີ້ແມ່ນຫົວໃຈຂອງການອຸທິດຕົນທີ່ແທ້ຈິງ.

ພຣະເຢຊູໄດ້ສອນເຣື່ອງການຖ່ອມຕົວໃນຄຳອຸປມາຂອງພຣະອົງເຊັ່ນດຽວກັນ. ໃນລູກາ 14:7-14, ພຣະເຢຊູໄດ້ໃຊ້ຄຳອຸປມາເຣື່ອງແຂກແລະເຈົ້າພາບໃນງານດອງ ເພື່ອທ້າທາຍຜູ້ຕິດຕາມພຣະອົງໃຫ້ຖ່ອມຕົວເລືອກບ່ອນນັ່ງທີ່ຕ່ຳສຸດໃນເຮືອນ. ຈົ່ງສລະບ່ອນນັ່ງທີ່ມີກຽດໄວ້ໃຫ້ຄົນອື່ນ ແລະໃຫ້ຄິດເສັຽວ່າທ່ານເອງບໍ່ມີກຽດສົມກັບບ່ອນນັ່ງນັ້ນ. *"ເພາະວ່າທຸກຄົນທີ່ຍົກຕົວຂຶ້ນຈະຕ້ອງຖືກຖອຍລົງແລະຜູ້ທີ່ຖ່ອມຕົວລົງຈະໄດ້ຮັບການຍົກຂຶ້ນ" (ລູກາ14:11).*

ຢ່າຫຼອກລວງຕົວເອງວ່າຄວາມຍິ່ງໃຫຍ່ໄດ້ມາເມື່ອມີຄົນຮູ້ຊື່ສຽງທ່ານຈຳນວນຫຼາຍຂຶ້ນເທົ່ານັ້ນ, ຕິດຕາມທ່ານໃນ Twitter, ແລະ ຈັດໃຫ້ທ່ານນັ່ງຫົວໂຕະຂອງເຂົາ. ຈົ່ງປະຫານນິສັຍຢ່າງນີ້ກ່ອນທີ່ມັນຈະປະຫານສາຍສັມພັນຂອງທ່ານກັບຄົນອື່ນ.

***ພວກເຮົາຈະປັບດູນໜ້າທີ່ຮັບຜິດຊອບຂອງພວກເຮົາເອງກັບຄົນອື່ນຢ່າງໃດ?***

### 3. **<u>ຟີລິບປອຍ 2:13-15</u>.**

*[13] ເພາະວ່າແມ່ນພຣະເຈົ້າເປັນຜູ້ຊົງກະທຳການຢູ່ພາຍໃນເຈົ້າທັງຫຼາຍ ໃຫ້ມີໃຈປາຖນາແລະໃຫ້ເຮັດໄປເພື່ອຊອບພຣະທັຍຂອງພຣະອົງ. [14] ຈົ່ງເຮັດທຸກສິ່ງ ໂດຍບໍ່ມີການຈົ່ມແລະຖົກຖຽງກັນ. [15] ເພື່ອເຈົ້າທັງຫຼາຍຈະບໍ່ຖືກຕິຕຽນແລະບໍ່ມີຄວາມຜິດ. ເປັນບຸດຂອງພຣະເຈົ້າທີ່ບໍ່ມີຕຳໜິໃນທ່າມກາງເຊື້ອຊາດອັນຄົດໂກງແລະຊົ່ວຊ້າເຈົ້າທັງຫຼາຍຈົ່ງປາກົດໃນທ່າມກາງເຂົາເໝືອນດັ່ງດວງສວ່າງຕ່າງໆ ທີ່ສ່ອງແຈ້ງໃນໂລກ.*

*ຈົ່ງເຮັດທຸກສິ່ງ ໂດຍບໍ່ມີການຈົ່ມແລະຖົກຖຽງກັນ (ຂໍ້14).*

ໂອຍ..ທ່ານໂປໂລເອີຍ. ທ່ານແນ່ໃຈວ່າຂ້ອຍຢືນລຽນແຖວກວ່ານຶ່ງຊົ່ວໂມງຊິບໍ່ໃຫ້ຂ້ອຍຈົ່ມຈັກຄຳຊັ້ນບໍ່! ພວກເຮົາສາມາດຍອມຮັບສະພາບຂອງເຮົາໂດຍປາສຈາກຄວາມຄຽດຮ້າຍຕໍ່ສິ່ງເຫຼົ່ານັ້ນ-ແທ້ບໍ່? ແມ່ນ..ພວກເຮົາເຮັດໄດ້. ພຣະເຢຊູໄດ້ເຮັດມາແລ້ວ...ແລະ ພຣະອົງຫວັງໃຫ້ພວກເຮົາເຮັດຕາມແບບຢ່າງຂອງພຣະອົງ. ໂດຍຣິດເດດຂອງພຣະວິນຍານບໍຣິສຸດ, ພວກເຮົາສາມາດດຳຣົງຊີວິດໂດຍປາສຈາກການຈົ່ມແລະຖົກຖຽງກັນ- ຫຼືໂກດແຄ້ນແລະຄຽດຮ້າຍກັນ. ໝາຍຄວາມວ່າ ເປັນທາງເລືອກຂອງທ່ານທີ່ຈະຕ້ອງຕັດສິນໃຈຍົກເລີກຄວາມຈົ່ມອອກໄປຈາກໂລກຂອງທ່ານ.

***ທ່ານເຄີຍເຫັນຄວາມສັມພັນແໜ້ນແຟ້ນຂຶ້ນໂດຍບົດບາດຂອງຄວາມຖ່ອມຕົວແນວໃດ?***

ໂຈນາທານ ແອັດເວີດ ເປັນສິດຍາພິບານທີ່ມີອາຊີບເປັນນັກຂຽນປຶ້ມຫຼາຍໆເຫຼັ້ມ. ລາວໄດ້ກາຍເປັນຄົນມີຊື່ສຽງໂດ່ງດັງຂອງໂລກໃນບົດບາດຂອງລາວໃນການປຸກໃຫ້ຕື່ນຢ່າງໃຫຍ່ຄັ້ງແລກໃນປີ 1730-40. ຊີວິດຂອງລາວເປັນຊີວິດທີ່ຕິດງານແລະເຕັມຕລອດ, ແຕ່ແລ້ວລາວກໍຄືກັນກັບພວກເຮົາເຈົ້າຂ້ອຍນີ້ແຫຼະ, ລາວເຄີຍປະສົບກັບຄວາມເຈັບຊ້ຳນ້ຳໃຈຢ່າງໃຫຍ່ຕລອດທາງ. ຫຼັງຈາກທີ່ໄດ້ຮັບໃຊ້ໂບດຂອງລາວຊາວສາມປີ, ລູກແກະຂອງລາວໄດ້ໄລ່ລາວອອກການ, ສົ່ງລາວແລະຄອບຄົວໄປຢູ່ຕາມຖນົນຫົນທາງ. ໃນຣະຫວ່າງການຖືກໄລ່ອອກການ, ຖືກກັ່ນແກ້ງ, ຖືກທັກຫຼັງ, ຄົນໃນເມືອງນັ້ນເຝົ້າລະວັງການປະພຶດຂອງລາວ. ຂນະທີ່ເຂົາເຝົ້າສັງເກດເບິ່ງການປະພຶດຂອງລາວ ຊາຍຜູ້ນຶ່ງກ່າວວ່າ: "ຂ້າພະເຈົ້າບໍ່ປາກົດເຫັນອາການລົບກວນໃຈໃນໃບໜ້າຂອງລາວແມ້ແຕ່ໜ້ອຍຕລອດອາທິດ, ແຕ່ ລາວປາກົດເປັນຄົນຂອງພະເຈົ້າ, ຜູ້ມີຄວາມສຸກເໜືອກວ່າສັດຕຣູຂອງລາວທີ່ຈະເອື້ອມມືເຖິງ..."

ແອັດເວີດໄດ້ພົບສິ່ງທີ່ທ່ານໂປໂລໄດ້ພົບ: ຄວາມຍິນດີທີ່ພຸ່ງຂຶ້ນສູງເໜືອການຂຶ້ນໆລົງໆຂອງຊີວິດ. ເໝືອນດັ່ງ

ເຄື່ອງບິນທີ່ບິນຢູ່ເໜືອຄວາມປັ່ນປ່ວນຂອງດິນຟ້າອາກາດ, ພວກເຮົາກໍສາມາດບິນຢູ່ເໜືອມໍລະສຸມສະຖານະການຕ່າງໆໃນຊີວິດຂອງເຮົາ. ຄວາມຍິນດີຂອງເຮົາສາມາດວາງໄວ້ສູງເໜືອສັດຕຣູຂອງເຮົາທີ່ຈະເອື້ອມມືເຖິງ.

ທ່ານໂປໂລໄດ້ສະແດງໃຫ້ເຮົາເຫັນວ່າ "ຈະສ່ອງແຈ້ງເໝືອນດັ່ງດວງດາວຕ່າງໆໃນໂລກແນວໃດ" (ຂໍ້15). ໂລກນີ້ເຕັມລົ້ນດ້ວຍພວກຂີ້ຈົ່ມ, ຜູ້ກຽດຊັງ, ຜູ້ຕິ, ຜູ້ເຍີ້ຍຫຍັນ. ຈົ່ງເປັນອາກາດສົດຂອງລົມຫາຍໃຈທີ່ວັທນາທັມຂອງພວກເຮົາຫິວກະຫາຍ. ຈະເປັນໄດ້ຢ່າງໃດ? ດ້ວຍເຮັດໃຫ້ເຊື່ອໝັ້ນວ່າພຣະເຈົ້າເປັນທີ່ເພິ່ງອີງຍິ່ງໃຫຍ່ໃນຊີວິດຂອງທ່ານ! ຂ້າພະເຈົ້າບໍ່ໄດ້ເວົ້າກ່ຽວກັບການມອງໂລກໃນແງ່ດີດ້ວຍສາຍຕາບອດ, ແຕ່ຄວນຢູ່ໃນຄວາມຈິງທີ່ພຣະເຈົ້າຊົງກໍາລັງກະທໍາຢູ່ກໍດີກວ່າ. *"ເພາະວ່າແມ່ນພຣະເຈົ້າເປັນຜູ້ຊົງກະທໍາການຢູ່ພາຍໃນເຈົ້າທັງຫຼາຍໃຫ້ມີໃຈປາຖນາແລະໃຫ້ເຮັດໄປເພື່ອຊອບພຣະທັຍຂອງພຣະອົງ"(ຂໍ້13).* ເວລາທ່ານເລີ່ມນໍາໃຊ້ຄໍາເວົ້າຂອງທ່ານໂປໂລຢ່າງຈິງຈັງ, ຄວາມສັມພັນຂອງທ່ານຈະມີຜົນກະທົບ:

- ເວລາທ່ານເອົາຈຸດສຸມອອກຈາກຕົນເອງແລະສະພາບການຂອງຕົນເອງ...
- ເວລາທ່ານສແວງຫາທາງຮັບໃຊ້ຢ່າງຖ່ອມຕົວຕໍ່ຜູ້ອື່ນ...
- ເວລາທ່ານເຊົາຈົ່ມແລະເລີ່ມຮັກຄົນອື່ນໂດຍການຮັບໃຊ້...
- ເວລາທ່ານໃຊ້ອຸປນິສັຍຢ່າງດຽວກັນກັບອຸປນິສັຍຂອງພຣະຄຣິດ...

...ຄວາມສັມພັນທຸກຢ່າງຂອງທ່ານກໍຈະເກີດຜົນດີ. ແລະຄົນພວກດຽວກັນນັ້ນຈະຄົ້ນພົບເຫັນທ່ານສະດຸດຂຸມຊັບທີ່ເຂົາເຂົາຊອກຫາຄື: ສັນຕິສຸກພາຍໃນແລະຄວາມຍິນດີທີ່ປ່ຽນໃໝ່.

***ກຸ່ມເຮົາຈະຮັບໃຊ້ເປັນບ່ອນປອດພັຍໃນການສົນທະນາຢ່າງໃດ?***

**ນໍາໃຊ້ໃນຊີວິດ**

ທ່ານຈະໃຊ້ບາດດກ້າວໃດເພື່ອຝຶກການຖ່ອມຕົນແລະຈັດຄວາມຕ້ອງການຂອງຄົນອື່ນໄວ້ກ່ອນຄວາມຕ້ອງການຂອງເຮົາເອງ. ຈົ່ງເລືອກເອົາການນໍາໃຊ້ຂໍ້ນຶ່ງຕໍ່ລົງໄປນີ້:

- **ບາດກ້າວນ້ອຍ.** ຈອດລົດບ່ອນຂີ້ຮ້າຍທີ່ສຸດອາທິດໜ້າ. ຄເຣດິດພິເສດຖ້າຜົນຕົກ. ມາແຕ່ເຊົ້າຈັດຫ້ອງໄວ້ສໍາລັບກຸ່ມຂອງທ່ານຊຸມນຸມ. ຈົ່ງບອກຜູ້ໃດຜູ້ນຶ່ງວ່າທ່ານຂອບໃຈສໍາລັບຂອງຂວັນ ຫຼືຄວາມຊໍານານຂອງລາວຫຼາຍພຽງໃດໃນບາງບ່ອນ.
- **ບາດກ້າວປານກາງ.** ເລົ່າເຣື່ອງຄວາມຫຼົ້ມເຫຼວຄັ້ງໃຫຍ່ຂອງທ່ານ ຈາກອະດີດຂອງທ່ານ. ສາຣະພາບຄວາມຕ້ອງການພຣະທັມຂ່າວປະເສີດຂອງທ່ານ. ອາສາສມັກໃນພັນທະກິດຮັບໃຊ້ພວກຂາດທີ່ພັກອາສັຍ ແລະ ປະຕິບັດຕໍ່ເຂົາເໝືອນດັ່ງທ່ານປະຕິບັດຕໍ່ເຈົ້າແຂວງ ຫຼື ຕໍ່ເຈົ້າຊີວິດ.
- **ບາດກ້າວໃຫຍ່.** ຈົ່ງຂໍໂທດຜູ້ໃດຜູ້ນຶ່ງທີ່ທ່ານເຮັດໃຫ້ເຂົາເຈັບຊໍ້ານໍ້າໃຈ. ຈົ່ງເລົ່າຄວາມປາຖນາທີ່ທ່ານຢາກໄດ້ຮັບການອະພັຍ. ຈົ່ງສນອງຄວາມຕ້ອງການຂອງຜູ້ໃດຜູ້ນຶ່ງດ້ວຍເງິນກ້ອນໃຫຍ່...ແລະ ເຮັດຢ່າງລັບໆ.

ເວລາໃດເທື່ອຫຼ້າສຸດທີ່ທ່ານຕໍ່ສູ້ຢ່າງໜັກເພື່ອຈະຍາດເປັນຜູ້ທີນຶ່ງໃນແຖວເພື່ອສິ່ງທີ່ທ່ານຢາກໄດ້? ເວລາໃດເປັນເທື່ອຫຼ້າສຸດທີ່ທ່ານຕໍ່ສູ້ຢ່າງໜັກເພື່ອບໍ່ຢາກເປັນຜູ້ທີນຶ່ງໃນແຖວທີ່ທ່ານຢ້ານຫຼາຍ? ມັນມີທາງອື່ນທີ່ດີກວ່າ;ໂດຍຄວາມເຊື່ອ, ຈົ່ງຫັດທໍາ!

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ PSI**